# <u>ແບບຟອມລາຍງານຜົນການຕິດຕາມກວດກາການຈັດຕັ້ງປະຕິບັດແຜນການຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໂຄງການລົງທຶນ ສຳລັບ ໂຄງການຂຸດຄົ້ນ ແຮ່ທອງແດງ ແລະ ແຮ່ຕິດພັນເຂດບ້ານຫ້ວຍຕຶງນາຍ-ພັນຫຼາ, ເມືອງກາສີ, ແຂວງວຽງຈັນ ຂອງບໍລິສັດ ຕຶງນາຍມາຍນິ້ງກຣຸບ ຈຳກັດ</u>

## I. <u>ຂໍ້ມູນ ກ່ຽວກັບ ໂຄງການ</u>

- ຊື່ໂຄງການ:...............**ໂຄງການຂຸດຄົ້ນແຮ່ທອງ ແລະ ແຮ່ຕິດພັນ**.......................................................
- ຊື່ເຈົ້າຂອງໂຄງການ:.....**ບໍລິສັດ ຕຶງນາຍມາຍນິ້ງກຣຸບ ຈຳກັດ**.................................................................
- ປະເພດໂຄງການ:...............**EIA**...........................................................................................
- ທີ່ຕັ້ງໂຄງການ: ..............**ເຂດບ້ານຫ້ວຍຕຶງນາຍ, ເມືອງກາສີ, ແຂວງວຽງຈັນ**.........................................
- ຂະແໜງການ:...................**ບໍ່ແຮ່**.........................................................................................
- ໄລຍະສຳປະທານ:.............**10 ປີ**.......................................................................................
- ກຳລັງການຜະລິດ:............ **134,000 ໂຕນ/ປີ**..........................................................................
- ເນື້ອທີ່ສຳປະທານໂຄງການ:...............**4 ກມ$^2$**..........................................................................
- ເນື້ອທີ່ຂຸດຄົ້ນ:............... **100 ເຮັກຕາ**.................................................................................
- ສະຖານະພາບໂຄງການ (IEE/EIA):....**ໄລຍະຂຸດຄົ້ນ (ຢຸດໂຈະການເຄື່ອນໄຫວວຽກງານພາກສະໜາມຊົ່ວຄາວ).**
- ໃບຢັ້ງຢືນຮັບຮອງ ( IEE/EIA):.................. **EIA**......................................................................

  ລົງວັນທີ, ເລກທີ:............ **29 ມິຖຸນາ 2012, 4284/ກຊສ**.............................................

## II. <u>ຄະນະຕິດຕາມກວດກາ</u>

- ວັນທີລົງຕິດຕາມກວດກາ:......**5-7/04/2017**...........................................................................
- ປະເພດການຕິດຕາມກວດກາ:.....**ປົກກະຕິ**...................................................................................
- ຄະນະຕິດຕາມກວດກາ:..**ທີມງານ ກປສສ, ກຊສ; ກົມບໍ່ແຮ່, ກະຊວງພະລັງງານ ແລະ ບໍ່ແຮ່; ກະຊວງແຜນການ ແລະ ການລົງທຶນ, ພະແນກ ຊສ ແຂວງວຽງຈັນ ແລະ ຫ້ອງການ ຊສ ເມືອງ ກາສີ**......................................
- ບົດບັນທຶກລົງຕິດຕາມກວດກາ:............**ຢູ່ໃນເອກະສານຄັດຕິດ 1**.......................................................
- ລາຍຊື່ຄະນະລົງຕິດຕາມກວດກາ:..........**ຢູ່ໃນເອກະສານຄັດຕິດ 2**.......................................................
- ລາຍການກວດສອບ:.......................**ຢູ່ໃນເອກະສານຄັດຕິດ 3**.......................................................

## III. ຈຸດປະສົງຂອງການກວດກາ ແລະ ບັນຫາທີ່ເອົາໃຈໃສ່

-ເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດມາດຕະການປ້ອງກັນ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຕາມທີ່ກຳນົດໄວ້ໃນບົດລາຍງານການສຶກສາເບື້ອງຕົ້ນ ກ່ຽວກັບ ສິ່ງແວດລ້ອມ;

-ເງື່ອນໄຂ ແລະ ພັນທະທີ່ກຳນົດໃນໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ.

## IV. ສະພາບການຈັດຕັ້ງປະຕິບັດໂຄງການມາເຖິງປະຈຸບັນ

ໂຄງການຂຸດຄົ້ນແຮ່ທອງ ແລະ ແຮ່ຕິດພັນ ໄດ້ຮັບອະນຸຍາດຈາກລັດຖະບານແຫ່ງ ສປປ ລາວໃນວັນທີ 18/11/2011 ໃນເນື້ອທີ່ 100 ເຮັກຕາ, ອາຍຸສຳປະທານ 10 ປີ, ເລີ່ມຂຸດຄົ້ນແຕ່ເດືອນ 18/11/2011, ຄາດຄະເນປະລິມານສະສົມແຮ່ທັງໝົດ 1,340,040ໂຕນ ຫຼື 134,000ໂຕນຕໍ່ປີ. ພາຍຫຼັງທາງບໍລິສັດ ໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງແລ້ວ, ໃນປີ 2013 ທາງບໍລິສັດ ດຳເນີນການທົດລອງຜະລິດແຮ່ ໄດ້ປະມານ 100 ໂຕນ, ຕໍ່ມາໄດ້ຢຸດໂຈະຊົ່ວຄາວ, ເນື່ອງຈາກ ເຂດຂຸດຄົ້ນແມ່ນຢູ່ນອກເຂດສຳປະທານໂຄງການ (ເພາະສາຍແຮ່ນອນຢູ່ນອກເຂດສຳປະທານ) ສະນັ້ນ, ບໍລິສັດຈຶ່ງໄດ້ໂຈະ ແລະ ສົມທົບການຂະແໜງການທີ່ກ່ຽວຂ້ອງເກັບກຳຂໍ້ມູນຄືນ ຈົນມາເຖິງປະຈຸບັນ. ສຳລັບ ການປະຕິບັດພັນທະຕ່າງໆ ບໍລິສັດ ຍັງຄ້າງຊຳລະຄ່າສຳປະທານປີ 2017 ແລະ ພັນທະ 5 ກອງທຶນ ນັບແຕ່ປີ 2011 ເປັນຕົ້ນມາ ຈຳນວນ 318,000 ໂດລາສະຫະລັດ. ປະຈຸບັນ ທາງບໍລິສັດ ໄດ້ຢຸດໂຈະການເຄື່ອນໄຫວວຽກງານພາກສະໜາມຊົ່ວຄາວ.

## V. ບັນຫາທີ່ພົບເຫັນ

**ສຳລັບ ບັນຫາທີ່ພົບເຫັນໃນພາກສະໜາມບໍ່ມີຫຍັງຫຼາຍ, ເນື່ອງຈາກ ໂຄງການບໍ່ໄດ້ມີການເຄື່ອນໄຫວເປັນເວລາ 3 ປີ ແລ້ວ, ແຕ່ມີບາງບັນຫາທີ່ໃຫ້ບໍລິສັດ ເອົາໃຈໃສ່ ເປັນຕົ້ນແມ່ນ:**

- **ສິ່ງເສດເຫຼືອ:..**ພົບເຫັນ ເສດນ້ຳມັນເຄື່ອງຕົກເຮ່ຍຊະຊາຍ ໃນເຂດພື້ນທີ່ໂຮງງານ;

-**ແລະ ອື່ນໆ**:

- ✓ ອ່າງເກັບນ້ຳຫາງແຮ່ແມ່ນຕັ້ງຢູ່ຕີນພູ ເຊິ່ງມີຄວາມສ່ຽງ ໃນເວລາລະດູຝົນອາດຈະເຮັດໃຫ້ນ້ຳໄຫຼຈາກພູລົງໃສ່ອ່າງຫາງແຮ່ໃດໜຶ່ງ ແລະ ອາດເຮັດໃຫ້ນ້ຳລົ້ນ ຫຼື ຈະພັງໄດ້;
- ✓ ບໍ່ມີປ້າຍເຕືອນ ແລະ ປ້າຍຫ້າມ ໃນບາງເຂດທີ່ມີຄວາມສ່ຽງ ເຂດໂຄງການ ໂດຍສະເພາະເຂດອ່າງເກັບນ້ຳຫາງແຮ່;
- ✓ ບໍ່ມີການລາຍງານຄວາມຄືບໜ້າ ກ່ຽວກັບ ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງສິ່ງແວດລ້ອມໂຄງການໃຫ້ພາກສ່ວນທີ່ກ່ຽວຂ້ອງຮັບຊາບ.

## VI. <u>ສະເໜີແກ້ໄຂ</u>

–**ອະທິບາຍການແກ້ໄຂບັນຫາໂດຍຫຍໍ້**: ກ່ອນທີ່ບໍລິສັດ ຈະສືບຕໍ່ດຳເນີນຂຸດຄົ້ນໃໝ່, ບໍລິສັດ ຕ້ອງເອົາໃຈໃສ່ແກ້ໄຂ ບັນຫາດັ່ງນີ້:

- ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງວຽງຈັນ ສົມທົບກັບຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງກາສີ ແລະ ຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງກາສີ ລົງເກັບກຳຂໍ້ມູນ ບໍລິສັດ ທີ່ກຳລັງດຳເນີນ ການຮ່ອນ ແລະ ສະກັດເອົາແຮ່ ຢູ່ໃກ້ກັບອ່າງເກັບນ້ຳຫາງແຮ່ຂອງໂຮງງານ ແລ້ວລາຍງານການນຳຂັ້ນ ເມືອງ ແລະ ແຂວງ ຮັບຊາບ ແລະ ດຳເນີນຕາມຂັ້ນຕອນລະບຽບການ;
- ປັບປຸງອ່າງເກັບນ້ຳຫາງແຮ່ ເຊິ່ງຕ້ອງໄດ້ມີການເຮັດຄອງລະບາຍນ້ຳທີ່ມາຈາກພູ ເພື່ອບໍ່ໃຫ້ໄຫຼເຂົ້າອ່າງ ໃຫ້ຖືກຕ້ອງຕາມມາດຕະຖານ-ເຕັກນິກ ໃຫ້ສຳເລັດ ກ່ອນຈະສືບຕໍ່ດຳເນີນການຜະລິດ;
- ໃຫ້ບໍລິສັດ ມີວິທີການ ແລະ ມາດຕະການໃນການຄຸ້ມຄອງເສດນ້ຳເຄື່ອງ ໃນເຂດພື້ນທີ່ຂອງໂຮງງານ ໃຫ້ເປັນລະບົບ;
- ຕິດຕັ້ງປ້າຍເຕືອນ ແລະ ປ້າຍຫ້າມ ໃນເຂດພື້ນທີ່ທີ່ມີຄວາມສ່ຽງຂອບເຂດໂຄງການ ແລະ ເຂດຊຸມຊົນ;
- ປັບປຸງແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຂອງໂຄງການ ແລ້ວນຳສົ່ງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາຮັບຮອງເອົາພາຍໃນປີ 2017;
- ໃຫ້ສືບຕໍ່ຊຸກຍູ້ພັນທະ 5 ກອງທຶນ ໃຫ້ລັດຖະບານ ນັບຕັ້ງແຕ່ປີ 2011 ຈຳນວນ ທັງໝົດ 318,000 ໂດ ລາສະຫະລັດ ໃຫ້ສຳເລັດໃນເດືອນ 5 ປີ 2017(ຕາມບົດບັນທຶກ ຄັ້ງວັນທີ 5 ເມສາ 2017);
- ໃຫ້ໂອນງົບປະມານບ້ວງຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ກຳນົດໄວ້ໃນ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ທີ່ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຮັບຮອງເອົາ ຈຳນວນ 222,000 ໂດລາສະຫະລັດ ໃນໄລຍະສຳປະທານ 10 ປີ, ແຕ່ ເນື່ອງຈາກບໍລິສັດ ບໍ່ໄດ້ດຳເນີນການມາ 6 ປີ, ສະນັ້ນ ສະເໜີໃຫ້ບໍລິສັດ ຈ່າຍງົບປະມານທີ່ຍັງເຫຼືອ ໃນ 4 ປີ ຕົກເປັນປີລະ 55,500 ໂດລາສະຫະລັດ ໃຫ້ພາກສ່ວນສູນກາງ, ແຂວງ ແລະ ເມືອງ;
- ໃຫ້ກຳນົດສະຖານທີ່ເກັບມ້ຽນຂີ້ເຫຍື້ອຈາກການນຳໃຊ້ຂອງພະນັກງານ-ກຳມະກອນ ໃນເຂດໂຄງການ;
- ໃຫ້ສ້າງບົດລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດມາດຕະການຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ສະເພາະທຸກໆ 3 ເດືອນ, 6 ເດືອນ ແລະ ປະຈຳປີ ສົ່ງໃຫ້ ກອງປະເມີນຜົນ ກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ພະແນກ ຊສ ແຂວງວຽງຈັນ ແລະ ຫ້ອງການ ຊສ ເມືອງກາສີ ຮັບຊາບ ເປັນປົກກະຕິ.